ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------====0000====-------------------

ສານປະຊາຊົນແຂວງ ຫຼວງພະບາງ — ເລກທີ...003.../ສປຊ

ລົງວັນທີ 13 ມັງກອນ 2016

# ຄຳສັ່ງແຕ່ງຕັ້ງຄະນະກຳມະການລົງກວດກາ

(ທີ່ດິນ)

ອີງຕາມກົດໝາຍວ່າດ້ວຍສານປະຊາຊົນແຫ່ງ ສ.ປ.ປ.ລາວ ສະບັບປັບປຸງປີ 2009.

ອີງຕາມມາດຕາ 123 ( ປັບປຸງ) ຂອງກົດໝາຍວ່າດ້ວຍການດຳເນີນຄະດີ ແພ່ງ ສະບັບປັບປຸງປີ 2012.

ອີງຕາມສຳນວນຄະດີ ແພ່ງ ເລກທີ 17/ຂຕພ, ລົງວັນທີ 11 ທັນວາ 2015.

ລະຫວ່າງ

ທ້າວ ເພັດຈຳພອນ ຂຸນດາລາ ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ 02, ເຮືອນເລກທີ 22, ບ້ານຊຽງທອງ, ເມືອງຫຼວງພະບາງ ແຂວງຫຼວງພະບາງ...............ໂຈດ.

ນາງ ບຸນທັນ ອາຍຸ 58 ປີ, ສັນຊາດລາວ, ອາຊີບ ຄ້າຂາຍ, ປັດຈຸບັນຢູ່ໜ່ວຍ 05, ເຮືອນເລກທີ 90, ບ້ານສັງຄະໂລກ, ເມືອງຫຼວງພະບາງ ແຂວງຫຼວງພະບາງ.................................. .......ຈຳເລີຍ.

ກ່ຽວເລື່ອງ: ທວງເອົາເງິນຄືນ

ຜ່ານການຄົ້ນຄວ້າສຳນວນຄະດີເລື່ອງນີ້ ສານປະຊາຊົນແຂວງຫຼວງພະບາງ ເຫັນວ່າມີຄວາມຈຳເປັນຕ້ອງລົງກວດກາທີ່ດິນ ຕັ້ງຢູ່ບ້ານສັງຄະໂລກ ເມືອງຫຼວງພະບາງ ແຂວງຫຼວງພະບາງ ເພື່ອຮັບປະກັນການຮ້ອງຟ້ອງ.

ດັ່ງນັ້ນ ສານປະຊາຊົນແຂວງ ຫຼວງພະບາງຈຶ່ງໄດ້ອອກຄຳສັ່ງແຕ່ງຕັ້ງຄະນະກຳມະການ ຊຶ່ງປະກອບດ້ວຍພາກສ່ວນກ່ຽວຂ້ອງດັ່ງລຸ່ມນີ້:

| | | | |
|---|---|---|---|
| 1 ທ່ານ | ແສງດາວເພັດ ເວດມະນີ | ຜູ້ພິພາກສາ,ຫົວໜ້າຄະນະສານແພ່ງ | ຫົວໜ້າ |
| 2 ທ່ານ | ໄຊຍະເລີດ ບັນດາວົງ | ຜູ້ພິພາກສາ | ຄະນະ |
| 3 ທ່ານ | ບຸນທະວີ ສີລັດຕະນະ | ຜູ້ພິພາກສາ | ຄະນະ |
| 4 ທ່ານ | ສອນເພັດ ພັນທະສີນ | ຈ່າສານ | ຄະນະ |
| 5 ທ່ານ | ຄຳມູນ ຮຸ່ງເຮືອງ | ວິຊາການ | ຄະນະ |
| 6 ທ່ານ | ນາງ ພອນສະຫວັນ | ໄອຍະການປະຊາຊົນແຂວງ | ຄະນະ |
| 7 ທ່ານ | ດາລີວອນ ກໍວີວັນ | ວິຊາການທີ່ດິນແຂວງ | ຄະນະ |
| 7 ທ່ານ | ພຸດທະສັກ ພະໄຊສົມບັດ | ວິຊາການທີ່ດິນແຂວງ | ຄະນະ |
| 8 ທ່ານ | ຄຳພັນ ວົງສອນເພັດ | ນາຍບ້ານສັງຄະໂລກ | ຄະນະ |

ພາຍຫຼັງສຳເລັດການກວດກາວັດແທກແລ້ວ ໃຫ້ຄະນະກຳມະການສະຫຼຸບຜົນຂອງການກວດກາວັດແທກທີ່ດິນ ຢູ່ບ້ານສັງຄະໂລກ ເມືອງຫຼວງພະບາງ ແຂວງຫຼວງພະບາງ ພາຍໃນກຳນົດ ເຈັດວັນ ຖ້າຫາກບໍ່ສຳເລັດພາຍໃນກຳນົດນີ້ແລ້ວໃຫ້ລາຍງານຕໍ່ສານຊາບ ຕາມກຳນົດເວລາອັນຄວນດ້ວຍ.

ຄຳສັ່ງແຕ່ງຕັ້ງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສານປະຊາຊົນແຂວງຫຼວງພະບາງ

ສອນບີຄົມ ຄຳພາລິດ